ສຳນັກງານ ຄຄຊ
ເລກທີ.0072.....
ວັນທີ.26.JAN.2016
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
----====000====-----

**ຕະຫຼາດຫຼັກຊັບລາວ**

ເລກທີ...02...8./ຕລຊລ

ນະຄອນຫຼວງວຽງຈັນ, ວັນທີ 26 JAN 2016

**ຮຽນ:** ທ່ານ ດຣ. ສົມພາວ ໄຟສິດ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

**ເລື່ອງ:** ການຂໍປະກອບທຶນເພີ່ມຕາມແຜນງົບປະມານປີ 2016.

- ອີງຕາມ ມະຕິກອງປະຊຸມສະພາບໍລິຫານ ຄັ້ງວັນທີ 11 ທັນວາ 2015.
- ອີງໃສ່ແຜນທຸລະກິດ ແລະ ແຜນງົບປະມານປະຈຳປີ 2016 ຂອງ ຕລຊລ.

**ຕະຫຼາດຫຼັກຊັບລາວ** (ຕລຊລ) ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບວ່າ ອີງໃສ່ສະຖານະພາບທາງການເງິນຂອງ ຕລຊລ ໃນປະຈຸບັນເຫັນວ່າ ເງິນທຶນທີ່ໃຊ້ໃນການບໍລິຫານທີ່ມີຢູ່ຈະຂາດດຸນໃນຕົ້ນເດືອນ ເມສາ 2016 ນີ້. ດັ່ງນັ້ນ, ເພື່ອເຮັດໃຫ້ການດຳເນີນງານຂອງ ຕລຊລ ເຄື່ອນໄຫວໄດ້ຕາມປົກກະຕິຕາມແຜນງົບປະມານປະຈຳປີ 2016 ນັ້ນ, ຕລຊລ ຕ້ອງການເງິນທຶນເພີ່ມທັງໝົດແມ່ນ **1.700.000 ໂດລາ** (ໜຶ່ງລ້ານເຈັດແສນໂດລາສະຫະລັດຖ້ວນ) ໂດຍແບ່ງຕາມສັດສ່ວນການຖືຄອງຮຸ້ນຂອງທັງສອງຂາຮຸ້ນຄື: ຝ່າຍ ທຫລ ແມ່ນ **860.376 ໂດລາ** (ແປດແສນຫົກສິບພັນສາມຮ້ອຍເຈັດສິບຫົກໂດລາ) ແລະ ຝ່າຍຕະຫຼາດຫຼັກຊັບ ສ.ເກົາຫຼີ ແມ່ນ **826.635 ໂດລາ** (ແປດແສນຊາວຫົກພັນຫົກຮ້ອຍສາມສິບຫ້າໂດລາ). (ລາຍລະອຽດໄດ້ຄັດຕິດເອກະສານມາພ້ອມ).

ພ້ອມດຽວກັນ, ຕລຊລ ຂໍຮຽນສະເໜີມາຍັງສອງຂາຮຸ້ນ ສ້າງຂໍ້ຕົກລົງກ່ຽວກັບການປະກອບທຶນຄັ້ງນີ້ຂຶ້ນເພື່ອກຳນົດມູນຄ່າໃນການປະກອບທຶນດັ່ງກ່າວ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອຄົ້ນຄ້ວາພິຈາລະນາຕາມເຫັນສົມຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ,

**ຜູ້ອຳນວຍການໃຫຍ່**
**ຕະຫຼາດຫຼັກຊັບລາວ**

ຄະນະກຳມະການຄຸ້ມຄອງຫຼັກຊັບ
ບໍລິສັດ
ຕະຫຼາດຫຼັກຊັບລາວ ຈຳກັດ
Lao Securities Exchange
Co.,Ltd
ນະຄອນຫຼວງວຽງຈັນ

**ວັນຄຳ ວໍຣະວົງ**

ບ່ອນນຳສົ່ງ:

- ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ